**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພາຍໃນ
ຫ້ອງການ

ເລກທີ 517/ຫກ

ນະຄອນຫຼວງວຽງຈັນ, ວັນທີ 23 ພະຈິກ 2023

# ແຈ້ງການ

**ເຖິງ: ບັນດາສະມາຄົມ ແລະ ມູນນິທິ ໃນຂອບເຂດທົ່ວປະເທດ ທີ່ນັບຖື.**

**ເລື່ອງ: ການສົ່ງບົດລາຍງານປະຈຳປີ ແລະ ການຕໍ່ໃບທະບຽນສະມາຄົມ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງພາຍໃນ ສະບັບເລກທີ 225/ພນ, ລົງວັນທີ 16 ພຶດສະພາ 2022;
- ອີງຕາມ ດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011;
- ອີງຕາມ ດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

ຫ້ອງການກະຊວງພາຍໃນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໂດຍປະຕິບັດຕາມດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 ມາດຕາ 18 ຂໍ້ 1 ແລະ ດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ ລົງວັນທີ 11 ສິງຫາ 2017 ມາດຕາ 30 ຂໍ້ 1 ແລະ ມາດຕາ 44 ວັກສອງ, ມູນນິທິ ແລະ ສະມາຄົມ ມີພັນທະລາຍງານປະຈຳປີ ໃຫ້ອົງການອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ກ່ຽວກັບສະພາບການຈັດຕັ້ງ, ການເຄື່ອນໄຫວວຽກງານ, ລາຍຮັບ-ລາຍຈ່າຍ ຂອງຕົນ. ພ້ອມນີ້, ໃນດຳລັດວ່າດ້ວຍສະມາຄົມ ມາດຕາ 21 ຍັງໄດ້ກຳນົດໃຫ້ສະມາຄົມຕໍ່ທະບຽນທຸກໆປີ. ສະນັ້ນ, ຫ້ອງການກະຊວງພາຍໃນ ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ໃຫ້ມູນນິທິ, ສະມາຄົມ ສົ່ງບົດລາຍງານປະຈຳປີ 2023 ມາຍັງກະຊວງພາຍໃນ, ກະຊວງອົງການທີ່ອະນຸມັດສ້າງຕັ້ງ ຊ້າສຸດບໍ່ໃຫ້ກາຍວັນທີ 15 ທັນວາ 2023.

2. ໃຫ້ສະມາຄົມ ປະກອບເອກະສານເພື່ອຂໍຕໍ່ໃບທະບຽນ ນຳກະຊວງພາຍໃນ ລ່ວງໜ້າ 30 ວັນ ກ່ອນໃບທະບຽນຂອງສະມາຄົມ ຈະໝົດອາຍຸການນຳໃຊ້ ເຊິ່ງການປະກອບເອກະສານ ໃຫ້ດຳເນີນການ ດັ່ງນີ້:

❖ **ສະມາຄົມທີ່ເຄື່ອນໄຫວໃນລະດັບຂອບເຂດທົ່ວປະເທດ**

➢ **ສະມາຄົມເສດຖະກິດ** ຍື່ນໜັງສືສະເໜີຂໍຄຳເຫັນກ່ຽວກັບການຕໍ່ທະບຽນສະມາຄົມ ນຳກະຊວງອຸດສາຫະກຳ ແລະ ການຄ້າ. ພາຍຫຼັງໄດ້ຄຳເຫັນແລ້ວ, ໃຫ້ປະກອບເອກະສານຄົບຖ້ວນ ແລ້ວຍື່ນມາຍັງກະຊວງພາຍໃນ ດັ່ງນີ້:

(1) ໜັງສືສະເໜີຂໍຕໍ່ທະບຽນ (ຕາມແບບພິມຂອງກະຊວງພາຍໃນ);

(2) ໜັງສືຄຳເຫັນຈາກກະຊວງອຸດສາຫະກຳ ແລະ ການຄ້າ;

(3) ບົດລາຍງານການເຄື່ອນໄຫວປະຈຳປີຂອງສະມາຄົມ (ຕາມແບບພິມຂອງກະຊວງພາຍໃນ);

(4) ສຳເນົາໃບທະບຽນສະມາຄົມ;

(5) ສຳເນົາຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກົດລະບຽບ, ຄະນະບໍລິຫານສະມາຄົມ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ);

(6) ສຳເນົາກົດລະບຽບຂອງສະມາຄົມສະບັບທີ່ໄດ້ຮັບຮອງແລ້ວ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ).

➢ **ສະມາຄົມວິຊາຊີບ, ເຕັກນິກວິຊາການ ແລະ ປະດິດຄິດແຕ່ງ ຫຼື ເຄື່ອນໄຫວໃນຂະແໜງການດຽວ** ຍື່ນໜັງສືສະເໜີຂໍຄຳເຫັນ ກ່ຽວກັບການຕໍ່ທະບຽນສະມາຄົມ ນຳກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ອະນຸມັດສ້າງຕັ້ງ. ພາຍຫຼັງໄດ້ຄຳເຫັນແລ້ວ, ໃຫ້ປະກອບເອກະສານຄົບຖ້ວນແລ້ວຍື່ນມາຍັງກະຊວງພາຍໃນ ດັ່ງນີ້:

(1) ໜັງສືສະເໜີ ຂໍຕໍ່ທະບຽນ (ຕາມແບບພິມຂອງກະຊວງພາຍໃນ);

(2) ໜັງສືຄຳເຫັນຈາກກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ອະນຸມັດສ້າງຕັ້ງ;

(3) ບົດລາຍງານການເຄື່ອນໄຫວປະຈຳປີ ຂອງສະມາຄົມ (ຕາມແບບພິມຂອງກະຊວງພາຍໃນ);

(4) ສຳເນົາໃບທະບຽນສະມາຄົມ;

(5) ສຳເນົາຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກົດລະບຽບ, ຄະນະບໍລິຫານສະມາຄົມ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ);

(6) ສຳເນົາກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ).

➢ **ສະມາຄົມສັງຄົມສົງເຄາະ ແລະ ພັດທະນາສັງຄົມ ຫຼື ສະມາຄົມທີ່ເຄື່ອນໄຫວກວມເອົາສອງຂະແໜງການຂຶ້ນໄປ** ປະກອບເອກະສານ ເພື່ອສະເໜີຂໍຕໍ່ທະບຽນນຳ ກະຊວງພາຍໃນ ດັ່ງນີ້:

(1) ໜັງສືສະເໜີ ຂໍຕໍ່ທະບຽນ (ຕາມແບບພິມຂອງກະຊວງພາຍໃນ);

(2) ບົດລາຍງານການເຄື່ອນໄຫວປະຈຳປີ ຂອງສະມາຄົມ (ຕາມແບບພິມຂອງກະຊວງພາຍໃນ);

(3) ສຳເນົາໃບທະບຽນສະມາຄົມ;

(4) ສຳເນົາຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກົດລະບຽບ, ຄະນະບໍລິຫານສະມາຄົມ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ);

(5) ສຳເນົາກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ).

❖ **ສະມາຄົມ ທີ່ເຄື່ອນໄຫວໃນລະດັບຂອບເຂດພາຍໃນແຂວງ ຫຼື ນະຄອນຫຼວງ, ເມືອງ ຫຼື ເທດສະບານ, ນະຄອນ ຫຼື ບ້ານ**

➢ **ສະມາຄົມເສດຖະກິດ** ຍື່ນໜັງສືສະເໜີຂໍຄຳເຫັນກ່ຽວກັບການຕໍ່ທະບຽນສະມາຄົມ ຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍຜ່ານພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ. ພາຍຫຼັງໄດ້ຮັບຄຳເຫັນແລ້ວ, ໃຫ້ປະກອບເອກະສານຄົບຖ້ວນແລ້ວຍື່ນໄປຍັງກະຊວງພາຍໃນ ໂດຍຜ່ານພະແນກພາຍໃນແຂວງ ຫຼື ນະຄອນຫຼວງ ດັ່ງນີ້:

(1) ໜັງສືສະເໜີ ຂໍຕໍ່ທະບຽນ (ຕາມແບບພິມຂອງກະຊວງພາຍໃນ);
(2) ໜັງສືຄຳເຫັນຂອງທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ແລະ ຄຳເຫັນຂອງກະຊວງອຸດສາຫະກຳ ແລະ ການຄ້າ;
(3) ບົດລາຍງານການເຄື່ອນໄຫວປະຈຳປີຂອງສະມາຄົມ (ຕາມແບບພິມຂອງກະຊວງພາຍໃນ);
(4) ສຳເນົາໃບທະບຽນສະມາຄົມ;
(5) ສຳເນົາຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກົດລະບຽບ, ຄະນະບໍລິຫານສະມາຄົມ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ);
(6) ສຳເນົາກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ).

➢ **ສະມາຄົມອາຊີບ, ເຕັກນິກວິຊາການ ແລະ ປະດິດຄິດແຕ່ງ ຫຼື ເຄື່ອນໄຫວໃນຂະແໜງການດຽວ** ຍື່ນໜັງສືສະເໜີຂໍຄຳເຫັນກ່ຽວກັບການຕໍ່ທະບຽນສະມາຄົມ ຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ອະນຸມັດສ້າງຕັ້ງ ໂດຍຜ່ານພະແນກການ ຫຼື ອົງການລັດທຽບເທົ່າພະແນກຂັ້ນແຂວງທີ່ກ່ຽວຂ້ອງ. ພາຍຫຼັງໄດ້ຮັບຄຳເຫັນໃຫ້ປະກອບເອກະສານຄົບຖ້ວນແລ້ວຍື່ນໄປຍັງກະຊວງພາຍໃນ ໂດຍຜ່ານພະແນກພາຍໃນແຂວງ ຫຼື ນະຄອນຫຼວງ ດັ່ງນີ້:

(1) ໜັງສືສະເໜີ ຂໍຕໍ່ທະບຽນ (ຕາມແບບພິມຂອງກະຊວງພາຍໃນ);
(2) ໜັງສືຄຳເຫັນຂອງທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ແລະ ຄຳເຫັນຂອງກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ອະນຸມັດສ້າງຕັ້ງ;
(3) ບົດລາຍງານການເຄື່ອນໄຫວປະຈຳປີ ຂອງສະມາຄົມ (ຕາມແບບພິມຂອງກະຊວງພາຍໃນ);
(4) ສຳເນົາໃບທະບຽນສະມາຄົມ;
(5) ສຳເນົາຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກົດລະບຽບ, ຄະນະບໍລິຫານສະມາຄົມ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ);
(6) ສຳເນົາກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ).

3) **ສະມາຄົມສັງຄົມສົງເຄາະ ແລະ ພັດທະນາສັງຄົມ ຫຼື ສະມາຄົມທີ່ເຄື່ອນໄຫວກວມເອົາສອງຂະແໜງການຂຶ້ນໄປ** ປະກອບເອກະສານເພື່ອຂໍຕໍ່ທະບຽນສະມາຄົມ ຈາກເຈົ້າແຂວງ, ເຈົ້າຄອງ

ນະຄອນຫຼວງ ໂດຍຜ່ານພະແນກພາຍໃນແຂວງ, ນະຄອນຫຼວງ. ພາຍຫຼັງໄດ້ຮັບຄໍາເຫັນໃຫ້ປະກອບເອກະສານຄົບຖ້ວນ ແລ້ວຍື່ນໄປຍັງກະຊວງພາຍໃນ ດັ່ງນີ້:

(1) ໜັງສືສະເໜີ ຂໍຕໍ່ທະບຽນ (ຕາມແບບພິມຂອງກະຊວງພາຍໃນ);

(2) ໜັງສືຄໍາເຫັນຂອງທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ;

(3) ສໍາເນົາໃບທະບຽນສະມາຄົມ;

(4) ບົດລາຍງານການເຄື່ອນໄຫວປະຈໍາປີ ຂອງສະມາຄົມ (ຕາມແບບພິມຂອງກະຊວງພາຍໃນ);

(5) ສໍາເນົາຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາກົດລະບຽບ, ຄະນະບໍລິຫານສະມາຄົມ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ);

(6) ສໍາເນົາກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ ພ້ອມທັງຄັດຕິດສະບັບແທ້ມາຢັ້ງຢືນ (ກໍລະນີມີການປ່ຽນແປງ).

**3.** ອາຍຸຂອງໃບທະບຽນສະມາຄົມ ມີກໍານົດ 01 ປີ ຕາມປີປະຕິທິນ, ສໍາລັບສະມາຄົມທີ່ອະນຸມັດສ້າງຕັ້ງໃໝ່ ແຕ່ເດືອນມັງກອນ ຫາ ເດືອນມິຖຸນາ ອາຍຸຂອງໃບທະບຽນສະມາຄົມ ຈະໝົດກໍານົດທ້າຍເດືອນທັນວາ ຂອງປີດຽວກັນ. ສໍາລັບສະມາຄົມ ທີ່ອະນຸມັດສ້າງຕັ້ງແຕ່ເດືອນ ກໍລະກົດ ຫາ ເດືອນທັນວາ ຂອງປີ ໃບທະບຽນສະມາຄົມຈະໝົດ ກໍານົດໃນທ້າຍເດືອນທັນວາ ຂອງປີຕໍ່ໄປ.

**4.** ການດໍາເນີນມາດຕະການຕໍ່ສະມາຄົມ ທີ່ສະເໜີມາຕໍ່ທະບຽນ ບໍ່ທັນຕາມເວລາທີ່ກໍານົດໄວ້ ແມ່ນຈະຖືກກ່າວເຕືອນ ແລະ ບັນທຶກໄວ້ໃນຖານຂໍ້ມູນ. ສະມາຄົມ ທີ່ບໍ່ຂໍຕໍ່ທະບຽນປົກກະຕິ ແມ່ນຈະນະໂຍບາຍໃຫ້ມາຕໍ່ໃບທະບຽນໄດ້ໃນປີນີ້ເທົ່ານັ້ນ ແລະ ຖ້າຫາກ ສະມາຄົມ ທີ່ບໍ່ສະເໜີຂໍຕໍ່ທະບຽນປະຈໍາປີ ຕໍ່ໄປແມ່ນຈະຖືກຍຸບເລີກຕາມທີ່ກໍານົດໃນມາດຕາ 48 ຂອງດໍາລັດວ່າດ້ວຍສະມາຄົມ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການ**

ກະຊວງພາຍໃນ ຫ້ອງການ

ນ. ອີໄລທອນ ສູນທອນ ໄຊມົງຄຸນ

❖ **ໝາຍເຫດ:** ແບບພິມເອກະສານຕ່າງໆ ແມ່ນສາມາດພົວພັນເອົາກັບ ກະຊວງພາຍໃນ ຫຼື ພະແນກພາຍໃນຂັ້ນແຂວງ

**ບ່ອນນໍາສົ່ງ:**

1. ສະມາຄົມ, ມູນນິທິ ພາກສ່ວນລະ 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ);
2. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ພາກສ່ວນລະ 01 ສະບັບ (ເພື່ອຊາບ ແລະ ຕິດຕາມ);
3. ພະແນກພາຍໃນແຂວງ, ນະຄອນຫຼວງ ພາກສ່ວນລະ 01 ສະບັບ (ເພື່ອຊາບ ແລະ ຕິດຕາມ);
4. ເກັບຮັກສາໄວ້ 01 ສະບັບ.